ສຳນັກງານ ຄຄຊ
ຂາເຂົ້າ
ເລກທີ....0615....
ວັນທີ....27 JUN 2019....
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ ເລກທີ: 26 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 27 ມິຖຸນາ 2019

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 10-14/06/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,12% ເມື່ອທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດ ສ. ອາເມຣິກາອອກມາບໍ່ດີ ເຫັນໄດ້ຈາກຕົວເລກດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກໃນເດືອນ 6/2019 ຢູ່ລະດັບ 97,90 ຈຸດ ຊຶ່ງຫຼຸດລົງຈາກລະດັບ 100,00 ຈຸດ ໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກດຸນງົບປະມານປະຈຳເດືອນ 5/2019 ຂາດດຸນ ເພີ່ມຂຶ້ນ ຈາກຂາດດຸນ 146,80 ຕື້ໂດລສະຫະລັດໃນເດືອນຜ່ານມາ ມາເປັນ 207,80 ຕື້ໂດລາສະຫະລັດ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 03-07/06/2019 | ອາທິດນີ້ 10-14/06/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1260 | 1,1273 | -0,12% |
| ເຢນ/ໂດລາ | 108,59 | 108,21 | 0,35% |
| ບາດ/ໂດລາ | 31,370 | 31,160 | 0,67% |
| ເປໂຊ/ໂດລາ | 52,05 | 52,03 | 0,04% |
| ຣູເປັຍ/ໂດລາ | 14.280,00 | 14.330,00 | -0,35% |
| ໂດລາສິງກະໂປ/ໂດລາ | 1,3675 | 1,3674 | 0,01% |
| ຢວນ/ໂດລາ | 6,9137 | 6,9259 | -0,18% |

**1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ**

- ລາຄານ້ຳມັນ ຫຼຸດລົງ 2,66% ຈາກ 53,37 ໂດລາ/ບາເຣວ ມາເປັນ 51,95 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບຂອງ ສ. ອາເມລິກາ ເພີ່ມຂຶ້ນອີກ 2,21 ລ້ານບາເຣວ ໃນອາທິດທີ 07/06/2019. ນອກນັ້ນ, ຄວາມຕ້ອງການນ້ຳມັນໂລກມີແນວໂນ້ມຫຼຸດລົງຕາມສະພາບເສດຖະກິດໂລກທີ່ຄາດວ່າຈະຂະຫຍາຍຕົວຫຼຸດລົງ;
- ລາຄາຄຳ ເພີ່ມຂຶ້ນ 1,57% ຈາກ 1.333,60 ໂດລາ/ອອນ ມາເປັນ 1.354,50 ໂດລາ/ອອນ ເນື່ອງຈາກເງິນໂດລາອ່ອນຄ່າລົງ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

**2. ສະພາບການຊື້-ຂາຍອັດຕາແລກປ່ຽນ**

**2.1 ສະພາບອັດຕາແລກປ່ຽນພາຍໃນ**

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,05% ແລະ ອ່ອນຄ່າລົງ 0,84% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,29% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 5,52% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 03-07/06/2019 | | | ອາທິດນີ້ 10-14/06/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.710,80 | 8.735,70 | 8.723,02 | 8.715,91 | 8.741,28 | 8.726,98 | -0,06% | -0,06% | -0,05% | -1,31% | -1,30% | -1,29% |
| ບາດ | 278,71 | 280,96 | 280,21 | 281,22 | 283,15 | 282,59 | -0,89% | -0,77% | -0,84% | -5,34% | -5,54% | -5,52% |

**2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2**

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,51% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 14,45%;
- ປະລິມານເງິນ M2 ຫຼຸດລົງ 0,54% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,57%.

**2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ**

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (07-13/06/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ຊື້ເງິນໂດລາສຸດທິ 7,08 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 26,88 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 19,80 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 363,04 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 80,47 ລ້ານບາດ ແລະ ຂາຍເງິນບາດໄດ້ 443,51 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດ ເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 10,22% ແລະ ເງິນບາດເພີ່ມຂຶ້ນ 10,71%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດູດຊຶມໂດຍການຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 0,35 ລ້ານໂດລາ ແລະ ຂາຍເງິນບາດ ຈຳນວນ 7,30 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 0,67 ລ້ານໂດລາ ແລະ ເງິນບາດ ຈຳນວນ 17,77 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ທຫລ ມີການຂາຍເງິນສຸດທິຈຳນວນ 5,00 ລ້ານໂດລາ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດກ່ອນ 31/05-06/06/2019 | | ອາທິດນີ້ 07-13/06/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **20,48** | **177,84** | **26,88** | **80,47** | **31,25%** | **-54,75%** |
| - ທ/ຄທຸລະກິດລັດ | 10,58 | 57,08 | 8,51 | 25,86 | -19,57% | -54,70% |
| - ທ/ຄທຸລະກິດອື່ນໆ | 9,90 | 120,76 | 18,37 | 54,61 | 85,56% | -54,78% |
| **2. ການຂາຍເງິນຕາຕ່າງປະເທດ** | **21,87** | **295,45** | **19,80** | **443,51** | **-9,47%** | **50,11%** |
| - ທ/ຄທຸລະກິດລັດ | 9,81 | 125,51 | 7,80 | 109,01 | -20,49% | -13,15% |
| - ທ/ຄທຸລະກິດອື່ນໆ | 12,06 | 169,94 | 12,00 | 334,50 | -0,50% | 96,83% |
| **ຊື້-ຂາຍສຸດທິ ທທກ** | **-1,39** | **-117,61** | **7,08** | **-363,04** | **-609,35%** | **208,68%** |
| - ຜົດຕ່າງຊື້-ຂາຍ | -6,79% | -66,13% | 26,34% | -451,15% | -487,91% | 582,22% |
| - ມູນຄ່າການຊື້-ຂາຍ | 42,35 | 473,29 | 46,68 | 523,98 | 10,22% | 10,71% |
| **3. ການຊື້-ຂາຍລະຫວ່າງ ທຫລກັບ ທທກ** | **-2,50** | **0,00** | **-0,35** | **-7,30** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 2,50 | 0,00 | 0,35 | 7,30 | | |
| **4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **1,54** | **38,21** | **0,67** | **17,77** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **-5,00** | **0,00** | **-5,00** | **0,00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 5,00 | 0,00 | 5,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 06/2019 ຄາດວ່າຈະຢູ່ໃນລະດັບ 2,84%.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານປະຈຳອາທິດວັນທີ (07-13/06/2019) ຈຳນວນ 31,51 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼອອກມີຈຳນວນ 233,54 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຊຳລະຄ່າສິນຄ້າ ແລະ ບໍລິການຈຳນວນ 150,82 ລ້ານໂດລາສະຫະລັດ, ຖອນເງິນ ຫຼື ໂອນເງິນໄປ ຝາກຢູ່ຕ່າງປະເທດ ຈຳນວນ 69,79 ລ້ານໂດລາສະຫະລັດ ແລະ ລາຍຈ່າຍອື່ນໆ ຈຳນວນ 10,19 ລ້ານໂດລາສະ ຫະລັດ). ສ່ວນກະແສເງິນໄຫຼເຂົ້າມີ ຈຳນວນ 202,04 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່າສິນຄ້າ ແລະ ບໍລິການຈຳ ນວນ 72,72 ລ້ານໂດລາສະຫະລັດ, ຮັບເງິນລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 66,35 ລ້ານໂດລາ, ຖອນເງິນຝາກ ຈາກຕ່າງປະເທດ ຈຳນວນ 32,77 ລ້ານໂດລາ ແລະ ຮັບເງິນກູ້ຢືມຂອງຫົວໜ່ວຍທຸລະກິດ ຈຳນວນ 10,50 ລ້ານໂດລາ).

### 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 532 ສະບັບທຽບໃສ່ອາທິດຜ່ານມາ ເຫັນວ່າເທົ່າເດີມ, ລວມມູນຄ່າໂອນທັງໝົດ 184,05 ຕື້ກີບ, ທຽບໃສ່ອາທິດຜ່ານມາ ຫຼຸດລົງ 154,89 ຕື້ກີບເທົ່າກັບ 45,69%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (07-13/06/2019) ມີທັງໝົດ 3.575 ຄັ້ງຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ: ຫຼຸດລົງ 722 ຄັ້ງ, ລວມມູນຄ່າໂອນທັງໝົດ 1.249,06 ຕື້ກີບ ທຽບໃສ່ອາທິດຜ່ານມາເຫັນວ່າ ຫຼຸດລົງ 299,99 ຕື້ກີບ ຫຼື ເທົ່າກັບ 24,21%.

ໃນນັ້ນ, ກະຊວງການເງິນມີການໂອນເງິນຈຳນວນ 120 ຄັ້ງ, ລວມມູນຄ່າໂອນທັງໝົດ 159,64 ຕື້ກີບ ເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ 87,65 ຕື້ກີບ ເທົ່າກັບ 54,91%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 810,10 ຈຸດ ຫຼຸດລົງ ຈາກ 815,21 ຈຸດ ຫຼື ເທົ່າກັບ 0,63% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 288.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,53 ຕື້ກວ່າກີບ ເພີ່ມຂຶ້ນ 122,14% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ 72,57% ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ VCL , EDL-GEN ແລະ LCC.

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>

| ບໍລິສັດ | ອາທິດກ່ອນ (31/05-06/06/2019) | | | ອາທິດນີ້ (07-13/06/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 53.000 | 327.895.000 | 6.200 | 201.900 | 1.249.745.000 | 6.200 | 280,94 | 281,14 | - |
| **EDL-GEN** | 83.100 | 328.245.000 | 3.950 | 53.500 | 209.626.000 | 3.900 | -3,62 | -36,14 | -1,27 |
| **LWPC** | - | - | 7.150 | - | - | 7.150 | - | - | - |
| **PTL** | 300 | 285.000 | 950 | 100 | 100.000 | 1.000 | -66,67 | -64,91 | 5,26 |
| **SVN** | 100 | 200.000 | 2.000 | 2.900 | 6.190.000 | 2.100 | 2.800 | 2.995 | 5,00 |
| **PCD** | - | - | 1.010 | 1.100 | 1.011.000 | 1.010 | - | - | - |
| **LCC** | 600 | 1.291.000 | 2.160 | 16.400 | 35.260.000 | 2.150 | 2.633,33 | 2.631,22 | -0,46 |
| **MHTL** | 5.300 | 15.510.000 | 3.000 | 11.900 | 35.644.000 | 3.000 | 124,53 | 129,81 | - |
| **LAT** | 1.500 | 1.125.000 | 750 | 400 | 308.000 | 770 | -73,33 | -72,62 | 2,67 |
| **VCL** | 14.900 | 18.080.000 | 1.250 | 600 | 750.000 | 1.200 | -95,97 | -95,85 | -4,00 |
| ທັງໝົດ | 158.800 | 692.631.000 | | 288.800 | 1.538.634.000 | | 81,86 | 122,14 | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- ທຫລ ໄດ້ຮ່ວມກອງປະຊຸມ ແລະ ປຶກສາຫາລືວຽກງານທີ່ຈຳເປັນຈຳນວນໜຶ່ງເປັນຕົ້ນ: ❶ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ ມິຖຸນາ 2019; ❷ກອງປະຊຸມຄົ້ນຄວ້າປຶກສາຫາລືກ່ຽວກັບຮ່າງກົດໝາຍວ່າດ້ວຍອາກອນ; ❸ກອງປະຊຸມຊີ້ນຳລະດັບຊາດ ເພື່ອຈັດຕັ້ງປະຕິບັດວຽກງານເປົ້າໝາຍພັດທະນາແບບຍືນຍົງ ຢູ່ ສປປ ລາວ ຄັ້ງທີ 3; ❹ກອງປະຊຸມສຳມະນາໃນຫົວຂໍ້: "Lao PDR ICT Blackchain for Business and Industry"; ❺ກອງປະຊຸມສຳມະນາໃນຫົວຂໍ້: "Balancing Fintech Opportunities and Risks-Implementing the Bali Fintech Agenda" ຢູ່ ປະເທດໄທ ແລະ ❻ກອງປະຊຸມຝຶກອົບຮົມໃນຫົວຂໍ້: "Finance Sector Surveillance" ຢູ່ປະເທດສິງກະໂປ.

- **ທຫລ ໄດ້ຈັດກອງປະຊຸມພາຍໃນ ເພື່ອປຶກສາຫາລືທາງດ້ານວິຊາການທີ່ສຳຄັນ ແລະ ວຽກງານປົ່ນອ້ອມຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການປະຈຳເດືອນ ມິຖຸນາ 2019; ❷ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບຄັ້ງທີ II ປະຈຳປີ 2019; ❸ກອງປະຊຸມຄົ້ນຄວ້າວຽກງານກອງທຶນໄຊສົມບູນ ❹ກອງປະຊຸມຄົ້ນຄວ້ານະໂຍບາຍສິນເຊື່ອສົ່ງເສີມ SMEs; ❺ກອງປະຊຸມເປີດກວ້າງຜ່ານຮ່າງເນື້ອໃນດຳລັດວ່າດ້ວຍບໍລິສັດເຊົ່າສິນເຊື່ອ (ສະບັບປັບປຸງ); ❻ກອງປະຊຸມສຳມະນາຮ່ວມກັບທະນາຄານແຫ່ງປະເທດໄທໃນຫົວຂໍ້: "ການແລກປ່ຽນເງິນຕາສອງຝ່າຍ (BSA) ແລະ ການຄຸ້ມຄອງເງິນຕາຕ່າງປະເທດ; ❼ກອງປະຊຸມໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບຕະຫຼາດທຶນໃນຫົວຂໍ້: "ການລະດົມທຶນຈາກມວນຊົນ ແລະ ຈົດທະບຽນໃນ ຕລຊລ"; ❽ຈັດຝຶກອົບຮົມຮ່ວມກັບອົງການ AMRO ໃນຫົວຂໍ້: "ການຍົກລະດັບຂີດຄວາມສາມາດຂອງພະນັກງານກະຊວງການເງິນ ແລະ ທະນາຄານກາງ" ຢູ່ ແຂວງຫຼວງພະບາງ ແລະ ❾ຈັດຝຶກອົບຮົມໃນຫົວຂໍ້: "Capital Account Liberalization Supervision and Monitoring Framework".
- **ທຫລ ໄດ້ສຳເລັດວຽກງານວິຊາສະເພາະທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ເຜີຍແຜ່ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ລົງໃນຈົດໝາຍເຫດທາງລັດຖະການ; ❷ສຳເລັດການລົງກວດກາທະນາຄານ ມາເລຍັນ ມະຫາຊົນ ສາຂາລາວ ປະຈຳປີ 2018 ຫາ ໄຕມາດ I/2019 ແລະ ❸ລົງກວດກາສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກປະຈຳປີ 2018 ຈຳນວນ 2 ແຫ່ງຄື: ວັນດາລາ ແລະ ເນຕິບັນດິດ.
- **ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ**❶ຄະນະຜູ້ອຳນວຍການທະນາຄານໄທພານິດ ຈຳກັດມະຫາຊົນ ແລະ ❷ຄະນະນຳສະພາທຸລະກິດ ສ. ອາເມລິກາ-ອາຊຽນ.

**III.** <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ.
- **ທຫລ ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກ ເພື່ອປຶກສາຫາລືວຽກງານທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມກະກຽມກອງປະຊຸມວຽກງານພັດທະນາຊົນນະບົດ ແລະ ເປີດຂະບວນການຍ້ອງຍໍ; ❷ກອງປະຊຸມປຶກສາຫາລືກ່ຽວກັບການຄົ້ນຄວ້າເນື້ອໃນລາຍງານການເມືອງຂົງເຂດເສດຖະກິດ ແລະ ❸ກອງປະຊຸມຄະນະກຳມະການເປີດເສລີການບໍລິການທາງດ້ານການເງິນຄັ້ງທີ 63 ຢູ່ປະເທດອິນໂດເນເຊຍ.
- **ທຫລ ກະກຽມຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆເປັນຕົ້ນ:** ❶ກອງປະຊຸມທາບທາມຄຳເຫັນຕໍ່ຮ່າງດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ທຫລ; ❷ກອງປະຊຸມເປີດກວ້າງທາບທາມຄຳເຫັນຕໍ່ຮ່າງກົດໝາຍວ່າດ້ວຍຫຼັກຊັບສະບັບປັບປຸງ; ❸ກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍສະໄໝສາມັນ ຄັ້ງທີ I ປະຈຳປີ 2019; ❹ກອງປະຊຸມກ່ຽວກັບການສ້າງ QR Code ສຳລັບລະບົບ ການຊຳລະ ແລະ ❺ກະກຽມການແຂ່ງຂັນກິລາມິດຕະພາບລະຫວ່າງ ທຫລ ແລະ ທະນາຄານແຫ່ງປະເທດໄທ ຄັ້ງວັນທີ 14 ແລະ ພິທີລົງນາມໃນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຄຸ້ມຄອງທະນາຄານທຸລະກິດລະຫວ່າງ ທຫລ ແລະ ທະນາຄານແຫ່ງປະເທດໄທ.

- ຫຫລ ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ ❶ເອກອັກຄະລັດຖະທູດແຫ່ງ ສະຫະລັດອິນເດຍ ປະຈໍາ ສປປ ລາວ; ❷ເອກອັກຄະລັດຖະທູດອັງກິດ ປະຈໍາ ສປປ ລາວ; ❸ຄະນະຊ່ຽວຊານຈາກທະນາຄານແຫ່ງລັດຫວຽດນາມ ແລະ ❹ **AgriBank** ຈາກ ສສ ຫວຽດນາມ ກອງທຶນສົ່ງເສີມການເຂົ້າຫາແຫຼ່ງທຶນໃນ ສປປ ລາວ (KFW).

ເຊັນແທນຫົວໜ້າຫ້ອງການ
ຮອງຫົວໜ້າຫ້ອງການ

ພູມມະລີ ສີຮິພົນເດດ